ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=====000=====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 006 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 28 JAN 2016

# ລະບຽບ
## ວ່າດ້ວຍການສະໜອງຂໍ້ມູນເພີ່ມເຕີມ ກ່ຽວກັບ ແຫຼ່ງທຶນຈົດທະບຽນ, ໂຄງສ້າງຜູ້ຖືຮຸ້ນ ແລະ ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ຂອງບໍລິສັດຫຼັກຊັບ

- ອີງຕາມກົດໝາຍວ່າດ້ວຍ ຫຼັກຊັບ, ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ, ສະບັບເລກທີ 188/ນຍ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມລະບຽບວ່າດ້ວຍ ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງ ບໍລິສັດຫຼັກຊັບ, ສະບັບເລກທີ 002/ຄຄຊ, ລົງວັນທີ 24 ກໍລະກົດ 2013;

ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກລະບຽບ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບສະບັບນີ້ກຳນົດ ເພີ່ມເຕີມກ່ຽວກັບ ການລາຍງານ ແຫຼ່ງທຶນຈົດທະບຽນ, ໂຄງສ້າງຜູ້ຖືຮຸ້ນ ແລະ ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ທີ່ກ່ຽວຂ້ອງກັບ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ຂອງບໍລິສັດຫຼັກຊັບ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດຫຼັກຊັບ ຢູ່ ສປປ ລາວ ເພື່ອຊອກຮູ້ກ່ຽວກັບຂໍ້ມູນດັ່ງກ່າວ ແນໃສ່ເຮັດໃຫ້ຂໍ້ມູນຂອງການລາຍງານ ມີຄວາມຖືກຕ້ອງ, ໂປ່ງໃສ ແລະ ສາມາດກວດສອບໄດ້.

**ມາດຕາ 2 ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ ໃນລະບຽບສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຜູ້ຖືຮຸ້ນທີ່ມີອຳນາດຄວບຄຸມ ໝາຍເຖິງ ຜູ້ຖືຮຸ້ນທີ່ມີສິດອອກສຽງ ບໍ່ວ່າທາງກົງ ຫຼື ທາງອ້ອມ ຫຼາຍກວ່າ ຫ້າສ່ວນຮ້ອຍຂອງຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດຂອງບໍລິສັດ;
2. ຜູ້ທີ່ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ໝາຍເຖິງ ບຸກຄົນທີ່ເປັນເຈົ້າຂອງຜົນປະໂຫຍດສຸດທ້າຍທີ່ແທ້ຈິງ ຈາກການເຄື່ອນໄຫວທຸລະກິດ, ກິດຈະການ ຫຼື ທຸລະກຳ ໃດໜຶ່ງ ລວມທັງຜູ້ມີອຳນາດໃນການຄວບຄຸມນິຕິບຸກຄົນ.

## ມາດຕາ 3 ຂອບເຂດການນຳໃຊ້

ລະບຽບສະບັບນີ້ນຳໃຊ້ສຳລັບ ບໍລິສັດຫຼັກຊັບ ລວມທັງ ຜູ້ຖືຮຸ້ນ, ຜູ້ຖືຮຸ້ນທີ່ມີອຳນາດຄວບຄຸມ, ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ, ສະພາບໍລິຫານ ແລະ ຄະນະຜູ້ອຳນວຍການ ຂອງບໍລິສັດຫຼັກຊັບ ທີ່ສ້າງຕັ້ງຢູ່ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວທຸລະກິດຫຼັກຊັບ ຢູ່ ສປປ ລາວ.

# ໝວດທີ 2
# ເອກະສານເພີ່ມເຕີມ ແລະ ການລາຍງານ

## ມາດຕາ 4 ເອກະສານເພີ່ມເຕີມ

ການປະກອບເອກະສານຂໍສ້າງຕັ້ງ ບໍລິສັດຫຼັກຊັບ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 52 ແລະ ລະບຽບວ່າດ້ວຍການສ້າງຕັ້ງ ແລະ ເຄື່ອນໄຫວຂອງ ບໍລິສັດຂອງບໍລິສັດຫຼັກຊັບ. ນອກຈາກນັ້ນບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງຂໍສ້າງຕັ້ງບໍລິສັດຫຼັກຊັບ ຕ້ອງປະກອບເອກະສານເພີ່ມເຕີມຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ເອກະສານກ່ຽວຂ້ອງກັບແຫຼ່ງທີ່ມາຂອງທຶນຈົດທະບຽນ ເປັນຕົ້ນ ໃບຢັ້ງຢືນການອະນຸຍາດນຳເງິນອອກນອກປະເທດ ຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງຂອງປະເທດດັ່ງກ່າວ ສຳລັບຜູ້ຖືຮຸ້ນທີ່ມາຈາກຕ່າງປະເທດ ແລະ ໃບຢັ້ງຢືນການໂອນເງິນເຂົ້າບັນຊີ ທີ່ເປີດໄວ້ຮອງຮັບເງິນທຶນຈົດທະບຽນ ຢູ່ ທະນາຄານ ແຫ່ງ ສປປ ລາວ;
2. ເອກະສານກ່ຽວຂ້ອງກັບຜູ້ຖືຮຸ້ນ ເປັນຕົ້ນ ອັດຕາສ່ວນການຖືຄອງຮຸ້ນ, ໃບມອບສິດໃຫ້ເປັນຜູ້ຖືຮຸ້ນແທນ, ສັນຍາກ່ຽວກັບການມອບສິດ ແລະ ໜ້າທີ່ ໃຫ້ເປັນຜູ້ຖືຮຸ້ນແທນ;
3. ເອກະສານກ່ຽວຂ້ອງກັບ ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ເປັນຕົ້ນ ສັນຍາລະຫວ່າງຜູ້ຖືຮຸ້ນ ແລະ ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ;
4. ເອກະສານກ່ຽວຂ້ອງກັບ ຜູ້ຖືຮຸ້ນທີ່ມີອຳນາດຄວບຄຸມ, ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ, ສະພາບໍລິຫານ ແລະ ຄະນະຜູ້ອຳນວຍການ ຂອງບໍລິສັດຫຼັກຊັບ ເປັນຕົ້ນ ໃບແຈ້ງໂທດ, ໃບປະຫວັດຫຍໍ້ ພ້ອມທັງລາຍລະອຽດກ່ຽວກັບ ການຖືກ ຫຼື ເຄີຍຖືກປະຕິບັດມາດຕະການທາງບໍລິຫານ ໂດຍອົງ ການຄຸ້ມຄອງວຽກງານຫຼັກຊັບ ທັງຢູ່ພາຍໃນ ແລະ ຕ່າງປະເທດ;
5. ເອກະສານອື່ນຕາມການກຳນົດຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ສຳລັບ ບໍລິສັດຫຼັກຊັບທີ່ໄດ້ຮັບການສ້າງຕັ້ງຂຶ້ນກ່ອນລະບຽບສະບັບນີ້ ຕ້ອງປະກອບເອກະສານເພີ່ມເຕີມໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນ ວັກໜຶ່ງ ຂອງມາດຕານີ້ ແລະ ໃຫ້ສຳເລັດພາຍໃນກຳນົດເວລາ ເກົ້າສິບວັນ ນັບແຕ່ວັນລະບຽບສະບັບນີ້ມີຜົນສັກສິດເປັນຕົ້ນໄປ.

ມາດຕາ 5 ການລາຍງານ

ທຸກການປ່ຽນແປງເນື້ອໃນຕາມທີ່ໄດ້ກຳນົດໄວ້ໃນ ວັກໜຶ່ງ ມາດຕາ 4 ຂອງລະບຽບສະບັບນີ້ ບໍລິສັດຫຼັກຊັບ ຕ້ອງລາຍງານຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນມີການປ່ຽນແປງເປັນຕົ້ນໄປ.

ມາດຕາ 6 ການຕິດຕາມກວດກາ ແລະ ກວດສອບ ຄວາມຖືກຕ້ອງຂອງເນື້ອໃນເອກະສານເພີ່ມເຕີມ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງຕິດຕາມກວດກາ ແລະ ກວດສອບຄວາມຖືກຕ້ອງຂອງຂໍ້ມູນກ່ຽວກັບ ແຫຼ່ງທີ່ມາຂອງທຶນຈົດທະບຽນ, ຜູ້ຖືຮຸ້ນ, ຜູ້ຖືຮຸ້ນທີ່ມີອຳນາດຄວບຄຸມ, ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ, ສະພາບໍລິຫານ ແລະ ຄະນະຜູ້ອຳນວຍການ ຂອງບໍລິສັດຫຼັກຊັບ.

ພາຍຫຼັງສິ້ນສຸດການຕິດຕາມກວດກາ ແລະ ກວດສອບ ເນື້ອໃນເອກະສານເພີ່ມເຕີມ ຫາກເຫັນວ່າ ຜູ້ຖືຮຸ້ນ, ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ, ສະພາບໍລິຫານ ຫຼື ຄະນະຜູ້ອຳນວຍການ ບໍ່ເໝາະສົມ ຈະບໍ່ໄດ້ຮັບການພິຈາລະນາ ຫຼື ບໍ່ອະນຸຍາດ ໃຫ້ເປັນ ຜູ້ຖືຮຸ້ນ, ສະພາບໍລິຫານ ຫຼື ຄະນະຜູ້ອຳນວຍການ ຂອງບໍລິສັດຫຼັກຊັບ. ສຳລັບ ບໍລິສັດຫຼັກຊັບທີ່ສ້າງຕັ້ງກ່ອນລະບຽບສະບັບນີ້ມີຜົນສັກສິດ ຕ້ອງປ່ຽນແປງ ຜູ້ຖືຮຸ້ນ, ສະພາບໍລິຫານ ຫຼື ຄະນະຜູ້ອຳນວຍການ ຂອງບໍລິສັດຫຼັກຊັບດັ່ງກ່າວ ໃຫ້ສອດຄ່ອງກັບການກຳນົດຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 3
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 7 ນະໂຍບາຍຕໍ່ຜູ້ມີຜົນງານ

ບໍລິສັດຫຼັກຊັບ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດລະບຽບສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມຄວາມເໝາະສົມ.

ມາດຕາ 8 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງບໍລິສັດຫຼັກຊັບ ແລະ ບໍລິສັດຫຼັກຊັບ ທີ່ໄດ້ຮັບການສ້າງຕັ້ງຂຶ້ນກ່ອນລະບຽບສະບັບນີ້ ແລະ ພາກສ່ວນກ່ຽວຂ້ອງ ຖ້າຫາກລະເມີດລະບຽບສະບັບນີ້ ຈະຖືກປະຕິບັດມາດຕະການ ຕາມແຕ່ລະກໍລະນີ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງບໍລິສັດຫຼັກຊັບ ປະກອບເອກະສານ ບໍ່ຖືກຕ້ອງ ແລະ ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນ ວັກໜຶ່ງ ມາດຕາ 4 ຂອງລະບຽບສະບັບນີ້ ຈະບໍ່ໄດ້ຮັບການພິຈາລະນາການຂໍສ້າງຕັ້ງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.
2. ຜູ້ຖືຮຸ້ນ, ຜູ້ຖືຮຸ້ນທີ່ມີອຳນາດຄວບຄຸມ, ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ, ສະພາບໍລິຫານ ຫຼື ຄະນະຜູ້ອຳນວຍການ ທີ່ສະໜອງເອກະສານເພີ່ມເຕີມບໍ່ຖືກຕ້ອງ ແລະ ຄົບຖ້ວນຕາມທີ່ໄດ້ກຳນົດໃນ ວັກໜຶ່ງ ມາດຕາ 4 ຂອງລະບຽບສະບັບນີ້ ຈະຖືກກ່າວເຕືອນ, ປັບໃໝແຕ່ ສິບລ້ານກີບ ຫາ ຊາວລ້ານກີບ. ກໍລະນີເປັນການລະເມີດຮ້າຍແຮງຕໍ່ກົດໝາຍອື່ນທີ່ກ່ຽວຂ້ອງ ຈະຖືກດຳເນີນຄະດີຕາມກົດໝາຍ;
3. ບໍລິສັດຫຼັກຊັບ ທີ່ໄດ້ຮັບການສ້າງຕັ້ງຂຶ້ນກ່ອນລະບຽບສະບັບນີ້ມີຜົນສັກສິດ ບໍ່ສະໜອງເອກະສານເພີ່ມເຕີມຕາມທີ່ໄດ້ກຳນົດໃນ ວັກໜຶ່ງ ມາດຕາ 4 ແລະ ບໍ່ປະຕິບັດ ຕາມ ວັກສອງຂອງ ມາດຕາ 6 ຂອງລະບຽບສະບັບນີ້ ຈະຖືກໂຈະການເຄື່ອນໄຫວທຸລະກິດບາງສ່ວນ ຫຼື ທັງໝົດ ພ້ອມທັງຈະຖືກ

ປັບໃໝ ສາມສ່ວນຮ້ອຍ ຂອງທຶນຈົດທະບຽນ. ກໍລະນີເປັນການລະເມີດຮ້າຍແຮງຕໍ່ກົດໝາຍອື່ນທີ່ກ່ຽວຂ້ອງ ຈະຖືກດຳເນີນຄະດີຕາມກົດໝາຍ;

4. ບໍລິສັດຫຼັກຊັບ ທີ່ບໍ່ປະຕິບັດຕາມ ມາດຕາ 5 ຂອງລະບຽບສະບັບນີ້ ຈະຖືກປັບໃໝແຕ່ ສິບລ້ານກີບ ຫາ ຊາວລ້ານກີບ. ກໍລະນີເປັນການລະເມີດຮ້າຍແຮງຕໍ່ກົດໝາຍອື່ນທີ່ກ່ຽວຂ້ອງ ຈະຖືກດຳເນີນຄະດີຕາມກົດໝາຍ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 9 ການຈັດຕັ້ງປະຕິບັດ**

ມອບໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ລະບຽບສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 10 ຜົນສັກສິດ**

ລະບຽບສະບັບນີ້ມີຜົນສັກສິດ ນັບແຕ່ວັນປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ລົງລາຍເຊັນເປັນຕົ້ນໄປ.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ດຣ.ບຸນປອນ ບຸດຕະນະວົງ